ສຳນັກງານ ຄຄຊ
ເລກທີ...0242...
ວັນທີ 01 MAR 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 02 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 28 ກຸມພາ 2018

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ມັງກອນ ປີ 2018 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນໜຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ມັງກອນ 2018 ແລະ ທິດທາງແຜນການໃນເດືອນ ກຸມພາ 2018 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ໄດ້ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ: ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ມັງກອນ 2018; ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານ ປະຈຳປີ ຂອງຂະແໜງການພາຍໃນ ແລະ ວຽກງານ 3 ສ້າງທົ່ວປະເທດ ປະຈຳປີ 2017 ແລະ ວາງທິດທາງແຜນການປີ 2018; ກອງປະຊຸມປຶກສາຫາລືກ່ຽວກັບການກະກຽມຄວາມພ້ອມ ເພື່ອລາຍງານຜົນການສະຫຼຸບການຈັດຕັ້ງປະຕິບັດກົດໝາຍ ແລະ ອອກນິຕິກຳໃຕ້ກົດໝາຍ; ກອງປະຊຸມເຜີຍແຜ່ເຊື່ອມຊຶມນິຕິກຳກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ; ກອງປະຊຸມສຳມະນາວິທະຍາສາດການຍົກສູງຄຸນນະພາບການເປັນເສນາທິການຮັບໃຊ້ການນຳ ແລະ ວຽກງານກໍ່ສ້າງຮາກຖານການເມືອງ; ກອງປະຊຸມສະຫຼຸບວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ປະຈຳປີ 2017; ກອງປະຊຸມທະວິພາຄີລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງຊາດກຳປູເຈຍ ທີ່ປະເທດກຳປູເຈຍ; ເຂົ້າຮ່ວມພິທີອວຍພອນວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 69 ປີ; ພິທີເປີດງານວາງສະແດງ Lao ICT Expo 2018;
- ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມເປີດກວ້າງ ເພື່ອທາບທາມຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ; ກອງປະຊຸມປຶກສາຫາລືວຽກງານປັບປຸງຮ່າງກົດໝາຍວ່າດ້ວຍລະບົບຊຳລະແຫ່ງຊາດ; ກອງປະຊຸມຖອດຖອນບົດຮຽນວຽກງານຄຸ້ມຄອງສະຖາບັນການເງິນຈຸລະພາກ ປະຈຳປີ 2017; ກອງປະຊຸມປຶກສາຫາລືຮ່າງແຜນຈັດຕັ້ງປະຕິບັດການເຂົ້າເຖິງແຫຼ່ງການບໍລິການທາງດ້ານການເງິນສຳລັບ ສປປ ລາວ ໄລຍະ 5 ປີ (2016-2020); ກອງປະຊຸມຄະນະສະເພາະກິດການປະເມີນຄວາມສ່ຽງລະດັບຊາດກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ກອງປະຊຸມຄະນະຮັບຜິດຊອບກະກຽມເນື້ອໃນກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ສະໄໝທີ III; ກອງປະຊຸມຄະນະສະເພາະກິດຂອງລັດຖະບານໃນການແກ້ໄຂບັນຫາບໍລິສັດພີເອັສ

ສົ່ງເສີມກະສິກຳ ແລະ ອຸດສາຫະກຳ ຄົບວົງຈອນ ຂາອອກ-ຂາເຂົ້າ; ກອງປະຊຸມຄະນະຮັບຜິດຊອບກະກຽມເນື້ອໃນ, ການຍ້ອງຍໍ ແລະ ຂະບວນການ ເພື່ອກະກຽມສະເຫຼີມ ສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ;

- ສຳເລັດການຈັດຝຶກອົບຮົມ ແລະ ສຳມະນາໃນຫົວຂໍ້ຕ່າງໆ: ຈັດຝຶກອົບຮົມ ໃນຫົວຂໍ້: "ວິທີການຕິດຕັ້ງ, ການນຳໃຊ້ ແລະ ການໂອນຜັງບັນຊີເຂົ້າໃນໂປຣແກຣມບັນຊີສະຖາບັນການເງິນ ແລະ ຂໍ້ມູນຂ່າວສານສິນເຊື່ອ online"
- ສຳເລັດການຕ້ອນຮັບແຂກເຂົ້າພົບປະຄະນະນຳ ທຫລ ຂອງທ່ານ ນ. Dutuk Mohaiyani Shamsudin ປະທານໃຫຍ່ ທະນາຄານເມແບັງ.

## III. ສະພາບພົ້ນເດັ່ນການເຄື່ອນໄຫວອຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

- ໃນເດືອນ 01/2018, ສະພາບເສດຖະກິດໂລກ ແມ່ນຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍໄດ້ຮັບແຮງຍູ້ໜູນຂອງມູນຄ່າການສົ່ງອອກ ແລະ ມູນຄ່າການລົງທຶນ. ໃນຂົງເຂດອາຊີໃຕ້ ຄາດວ່າຈະຂະຫຍາຍຕົວໃນລະດັບ 6,5% ໃນປີ 2018 ແລະ 7% ໃນປີ 2019 ເນື່ອງຈາກໄດ້ຮັບແຮງຊຸກຍູ້ຈາກອຸປະສົງພາຍໃນປະເທດ ແລະ ຕະຫຼາດແຮງງານທີ່ຟື້ນຕົວດີຂຶ້ນຕໍ່ເນື່ອງ. ເຖິງຢ່າງໃດກໍ່ຕາມ, ໃນຂົງເຂດເອີຣົບຕາເວັນອອກສ່ຽງໃຕ້ ຄາດວ່າເສດຖະກິດຈະຂະຫຍາຍຕົວຊ້າ ໃນລະດັບ 2,3% ໃນປີ 2018 ແລະ 2,4% ໃນປີ 2019.
- ສຳລັບອັດຕາແລກປ່ຽນ: ເງິນໂດລາອ່ອນຄ່າ 0,95% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີ ເຊິ່ງເຫັນໄດ້ຈາກຕົວເລກລາຍໄດ້ສ່ວນບຸກຄົນເພີ່ມຂຶ້ນພຽງແຕ່ 0,3% ຂອງເດືອນ 11/2017 ຈາກເພີ່ມຂຶ້ນ 0,4% ໃນເດືອນຜ່ານມາ ແລະ ຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກຫຼຸດລົງມາຢູ່ທີ່ 122,1 ຈຸດຂອງເດືອນ 12/2017 ຈາກ 126,6 ຈຸດ ໃນເດືອນຜ່ານມາ; ພ້ອມກັນນັ້ນ, ການປ່ຽນແປງຕົວເລກການຈ້າງງານບໍ່ລວມພາກສ່ວນກະສິກຳຂອງ ສ. ອາເມລິກາ ເພີ່ມຂຶ້ນພຽງແຕ່ 148.000 ຄົນ ຂອງເດືອນ 12/2017 ໃນຂະນະທີ່ນັກວິເຄາະຄາດຄະເນວ່າຈະເພີ່ມຂຶ້ນ 190.000 ຄົນ ຈາກເພີ່ມຂຶ້ນ 252.000 ຄົນ ໃນເດືອນຜ່ານມາ ແລະ ຕົວເລກຍອດຂາຍສິນຄ້າຂາຍຍ່ອຍຂອງເດືອນ 12/2017 ເພີ່ມຂຶ້ນພຽງແຕ່ 0,4% ຈາກເພີ່ມຂຶ້ນ 0,9% ໃນເດືອນຜ່ານມາ;
- ສ່ວນລາຄານ້ຳມັນ ເພີ່ມຂຶ້ນ 4,86% ຈາກ 57,05 ໂດລາ/ບາເຣວ ມາເປັນ 59,82 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ຫຼຸດລົງ 4,95 ລ້ານບາເຣວ ໃນອາທິດທີ 05/01/2018, ຈາກຫຼຸດລົງ 7,42 ລ້ານບາເຣວ ໃນອາທິດຜ່ານມາ; ພ້ອມກັນນັ້ນ, ປະລິມານການຜະລິດ ແລະ ການຂົນສົ່ງນ້ຳມັນດິບຂອງ ສ. ອາເມລິກາ ຫຼຸດລົງ ເນື່ອງຈາກໄດ້ຮັບຜົນກະທົບຈາກອາກາດທີ່ໜາວຈັດ ໂດຍສະເພາະ ເຂດຕາເວັນອອກຂອງ ສ. ອາເມລິກາ ທີ່ກຳລັງພົບກັບພາຍຸຫິມະ ແລະ ອາກາດທີ່ໜາວຈັດ. ໃນດ້ານລາຄາຄຳ ເພີ່ມຂຶ້ນ 1,27% ຈາກ 1.274,85 ໂດລາ/ອອນ ມາເປັນ 1.291,01 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ, ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ ແລ້ວຫັນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ. ໃນນັ້ນ, ກອງທຶນ SPDR ໄດ້ຊື້ຄຳ ຈຳນວນ 1,18 ໂຕນ ເຮັດໃຫ້ປະລິມານຄຳທີ່ກອງທຶນ SPDR ຖືຄອງແມ່ນ 834,86 ໂຕນ ໃນວັນທີ 05/01/2018 ຈາກ 833,68 ໂຕນ ໃນວັນທີ 04/01/2018.

### 2. ສະພາບເງິນຕາພາຍໃນ.

– ອັດຕາເງິນເຟີ້ປະຈຳເດືອນ 1/2018 (ຕົວເລກຄາດຄະເນ) ຢູ່ໃນລະດັບ 0,41% ເພີ່ມຂຶ້ນຈາກ 0,15% ໃນເດືອນ 12/2017;

- ຖານເງິນຕາປະຈຳເດືອນ 1/2018 ຫຼຸດລົງ 85,74 ຕື້ກີບ ຫຼື 0,22% ທຽບໃສ່ເດືອນ 12/2017, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,75%. ປະລິມານເງິນ M2 ເພີ່ມຂຶ້ນ 647,06 ຕື້ກີບ ຫຼື 0,82% ທຽບໃສ່ເດືອນ 12/2017 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,398,58 ຕື້ກີບ ຫຼື 11,80%;

- ອັດຕາແລກປ່ຽນທີ່ວລະບົບໃນເດືອນ 1/2018 ທຽບເດືອນ 12/2017 ເໜັງຕີງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບແຂງຄ່າ 0,16% ທຽບເງິນໂດລາ ແຕ່ອ່ອນຄ່າ 0,64% ທຽບເງິນບາດ;

- ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 01/2018 (13/12/2017-12/01/2018) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ເພີ່ມຂຶ້ນ 31,49% ຖ້າທຽບໃສ່ເດືອນ 12/2017. ທທກ ຊື້ເງິນຕາຕ່າງປະເທດ ສຸດທິ 14,59 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຊື້ເງິນໂດລາສຸດທິ 74,59 ລ້ານໂດລາສະຫະລັດ, ແຕ່ຂາຍເງິນບາດສຸດທິ 1.868,58 ລ້ານບາດ ຫຼື 60 ລ້ານໂດລາສະຫະລັດທຽບເທົ່າ). ນອກນັ້ນ, ທຫລ ໄດ້ຊື້ເງິນຕາຕ່າງປະເທດຈາກ ທທກ ສຸດທິ 24,90 ລ້ານໂດລາສະຫະລັດ. ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 51,70 ລ້ານໂດລາສະຫະລັດທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາສະຫະລັດ 40,16 ລ້ານໂດລາສະຫະລັດ ແລະ ເງິນບາດ 359,22 ລ້ານບາດ ຫຼື 11,54 ລ້ານໂດລາສະຫະລັດ);

- ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈຳເດືອນ 01/2018 (12/12/2017-12/01/2018) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 154,57 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼອອກຜ່ານລະບົບທະນາຄານ ຈຳນວນ 900,09 ລ້ານໂດລາສະຫະລັດ ເພື່ອຊຳລະຄ່ານຳເຂົ້າສິນຄ້າຂອງບັນດາວິສາຫະກິດ ຈຳນວນ 542,96 ລ້ານໂດລາສະຫະລັດ ແລະ ຊຳລະຄ່າບໍລິການ ຈຳນວນ 150,45 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 745,53 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຮັບເງິນຈາກການສົ່ງອອກສິນຄ້າ ຈານວນ 267,31 ລ້ານໂດລາສະຫະລັດ, ຮັບຈາກການບໍລິການ ຈຳນວນ 164,39 ລ້ານໂດລາສະຫະລັດ ແລະ ຮັບຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 163,37 ລ້ານໂດລາສະຫະລັດ.

## 3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

- ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/01/2018 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 68.669,79 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,45% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,57%. ເງິນຝາກເປັນເງິນກີບ ຫຼຸດລົງ 0,14% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 46,18% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 0,96% ຊຶ່ງກວມເອົາ 53,82% ຂອງເງິນຝາກທັງໝົດ;

- ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/01/2018 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 67.348,47 ຕື້ກີບ ເພີ່ມຂຶ້ນ 2,77% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,29%. ສິນເຊື່ອເປັນເງິນກີບ ກວມເອົາ 49,42% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 50,59% ຂອງສິນເຊື່ອທັງໝົດ;

- ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 24,83 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 4,75%, ເກັບຕົ້ນທຶນໄດ້ 26,55 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 37,92% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 1/2018 ມີຈຳນວນ 3.178,73 ຕື້ກີບ ເທົ່າກັບ 95,51% ຂອງແຜນການ (3.328,31 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.117,78 ຕື້

ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 334,33 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 295,70 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 430,92 ຕື້ກີບ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ ມີຈຳນວນ 3.255 ສະບັບ ຫຼຸດລົງ 20,70% ເປັນເງິນຈຳນວນ 1.387,39 ຕື້ກີບ ຫຼຸດລົງ 16,33% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 162 ຄັ້ງ ຫຼຸດລົງ 12,90% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 645,46 ຕື້ກີບ ຫຼຸດລົງ 25,74% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/12/2017-24/1/2018 ມີຈຳນວນ 15.282 ຄັ້ງ ລາຍລະອຽດມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ ຈຳນວນ 15.004 ຄັ້ງ ມີມູນຄ່າການໂອນ 5.043,61 ຕື້ກີບ ເພີ່ມຂຶ້ນ 19,20% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ຈຳນວນ 4.341 ຄັ້ງ. ໃນນັ້ນ ມີ 42 ພາກສ່ວນທີ່ເຮັດທຸລະກຳ (ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 278 ຄັ້ງ ມີມູນຄ່າການໂອນ 350,61 ຕື້ກີບ ຫຼຸດລົງ 35,41%.

### 4.2 ການຊື້-ຂາຍພັນທະບັດ

- ໃນເດືອນ 1/2018 ພັນທະບັດກະຊວງການເງິນ, ໄດ້ມີການໄຖ່ຖອນພັນທະບັດບ້ວງລ້າງໜີ້ ໃຫ້ບໍລິສັດໄຊຊະນະພັດທະນາກໍ່ສ້າງ ຈຳນວນ 15 ຕື້ກີບ;
- ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.812 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 154 ຕື້ກີບ ແລະ 65 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.663 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທທລ 2.995 ຕື້ກີບ);
- ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 1/2018 ມີການຈຳໜ່າຍ ແລະ ໄຖ່ຖອນພັນທະບັດໃຫ້ທະນາຄານອຸດສະຫະກຳ ແລະ ການຄ້າ ສປ ຈີນ ຈຳນວນ 30 ລ້ານໂດລາສະຫະລັດ ແລະ 40 ລ້ານໂດລາສະຫະລັດຕາມລຳດັບ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນ ທັງໝົດ 384 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 969,87 ຈຸດ ຫຼຸດລົງ 3,50% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 2,86% ເມື່ອທຽບໃສ່ດັດຊະນີທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 500.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,27 ຕື້ກີບ ຫຼຸດລົງ 14,52% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 47,55% ຂອງມູນຄ່າການຊື້-ຂາຍທັງໝົດ;
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.822 ກີບ/ຮຸ້ນ ເພີ່ມຂຶ້ນ 324 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 99.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 580,47 ລ້ານກວ່າກີບ ຫຼຸດລົງ 42,53% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 21,22% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ;
- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.587 ກີບ/ຮຸ້ນ ຫຼຸດລົງ 122 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 348.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ

1,59 ຕື້ກວ່າກີບ ເພີ່ມຂຶ້ນ 1,81% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 43,91% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ;

- ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 3.850 ກີບ/ຮຸ້ນ ຫຼຸດລົງ 1.600 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,92 ລ້ານກວ່າກີບ ເພີ່ມຂຶ້ນ 76,61% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດທັງໝົດ 100% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.092 ກີບ/ຮຸ້ນ ຫຼຸດລົງ 14 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 22,80 ລ້ານກີບ ເພີ່ມຂຶ້ນ 192,68% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 31,84% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ;

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ ບໍ່ມີການປ່ຽນແປງເມື່ອທຽບໃສ່ເດືອນຜ່ານມາ ຄື 2.950 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,18 ລ້ານກີບ ເພີ່ມຂຶ້ນ 300% ເມື່ອທຽບໃສ່ເດືອນທີ່ຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດທັງໝົດ100% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ;

- ຮຸ້ນຂອງບໍລິສັດ ພູສີກໍ່ສ້າງ ມະຫາຊົນ (PCD) ມີລາຄາຊື້-ຂາຍສະເລ່ຍ 1.613 ກີບ/ຮຸ້ນ ຫຼຸດລົງ 18 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 40.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 65,65 ລ້ານກີບ ຫຼຸດລົງ 2,04% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດສະເລ່ຍ ກວມເອົາ 48,86% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PCD ທັງໝົດ.

6. <u>ວຽກງານອື່ນໆ</u>

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດ ນຳເງິນເຂົ້າ ສປປ ລາວ ຈຳນວນ 69,01 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 47% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 159 ລ້ານໂດລາສະຫະລັດ ກວມເອົາ 86% ຂອງເງິນທັງໝົດ, ເງິນບາດ 290 ລ້ານບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 85,31 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 63% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 67,54 ລ້ານໂດລາສະຫະລັດ ກວມເອົາ 79% ຂອງເງິນທັງໝົດ, ເງິນບາດ 473 ລ້ານບາດ, 3.505 ເອີໂຣ, 7.150 ຝຣັ່ງສະວິດ, 3.230 ປອນສະເຕີລິງ, 6,53 ລ້ານເຢັນ, 18.295 ໂດລາແຄນນາດາ, 72.025 ໂດລາອົດສະຕາລີ, ແລະ 5.278 ໂດລາສິງກະໂປ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການອອກໃບອະນຸຍາດສ້າງຕັ້ງສາຂາທະນາຄານທຸລະກິດ 2 ແຫ່ງ ຄື: ທະນາຄານອາເຣັສບີ ລາວ ຈຳກັດ ສາຂາດົງໂດກ ແລະ ທະນາຄານ ເອຊີລີດາ ລາວ ຈຳກັດ ສາຂາໄຊຍະບູລີ; ສຳເລັດການນຳສົ່ງບົດລາຍງານຜົນການກວດກາ ປະຈຳປີ 2016 ຫາ ໄຕມາດ 02 ປີ 2017 ໃຫ້ 3 ທະນາຄານ ຄື: ທະນາຄານລາວ-ຈີນ ຈຳກັດ, ທະນາຄານອຸດສະຫະກຳ ແລະ ການຄ້າ ສປ ຈີນ, ທະນາຄານແຫ່ງປະເທດຈີນ; ສຳເລັດການອອກແຈ້ງການກ່ຽວກັບການຈ່າຍເງິນປັນຜົນຂອງທະນາຄານທຸລະກິດ ແລະ ການໂອນກຳໄລຂອງສາຂາທະນາຄານທຸລະກິດ; ສຳເລັດການອອກໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ 02 ແຫ່ງຄື: ສກວບ ເມືອງລາວ ແລະ ສກວບ ຈະເລີນໄວ; ສຳເລັດການມອບໃບຢັ້ງຢືນໃຫ້ບໍລິສັດ ບີດີໂອ (ລາວ) ຈຳກັດ ໃນການເປັນບໍລິສັດກວດສອບສະຖາບັນການເງິນ;

– ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈຳນວນ 24 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 701 ສະບັບ.

## ພາກທີ II

## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນມູນຄ່າຍ່ອຍ; ຂໍ້ຕົກລົງວ່າດ້ວຍການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວຢູ່ທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ; ຂໍ້ຕົກລົງວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ (ສະບັບປັບປຸງ); ຂໍ້ຕົກລົງວ່າດ້ວຍການກວດສອບພາຍນອກ; ຂໍ້ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນທາງດ້ານຫຼັກການ; ຂໍ້ຕົກລົງວ່າດ້ວຍຕົວແທນຂຶ້ນທະບຽນຮຸ້ນກູ້. ພ້ອມກັນນັ້ນ, ກໍ່ໄດ້ສຸມໃສ່ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ; ກົດໝາຍວ່າດ້ວຍຫຼັບຊັບ ແລະ ກົດໝາຍວ່າດ້ວຍທະນາຄານທຸລະກິດ;

– ສືບຕໍ່ກະກຽມຮອບດ້ານສຳລັບການສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ;

– ສືບຕໍ່ກະກຽມຈັດກອງປະຊຸມຕ່າງໆ ຄື: ① ກອງປະຊຸມພົບປະທະນາຄານທຸລະກິດທົ່ວລະບົບ ກ່ຽວກັບວຽກງານຄຸ້ມຄອງ-ກວດກາ ປະຈຳປີ 2017; ② ກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ສະໄໝທີ III ປະຈຳປີ 2017; ③ ກອງປະຊຸມທະວິພາຄີ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງມຽນມາ; ④ ກອງປະຊຸມເຜີຍແຜ່ ແລະ ເຊື່ອມຊຶມບັນດາມະຕິກອງປະຊຸມຂອງສະພາແຫ່ງຊາດ, ດຳລັດຂອງນາຍົກລັດຖະມົນຕີ ແລະ ເອກະສານທີ່ສຳຄັນຈຳນວນໜຶ່ງ; ⑤ ກອງປະຊຸມເຜີຍແຜ່ແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານຕາມມາດຕະຖານບາເຊວແຕ່ປີ 2017-2025;

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

ດຣ ສົມພາວ ໄຟສິດ